






ອົງການ ເຟັຣນອິນເຕີເນເຊິນເນວ໌ ປະຈຳ ລາວ

# ຕ້ອງການຮັບສະໝັກພະນັກງານ ປະຈຳຢູ່ແຂວງຫຼວງພະບາງ

ທ່ານມີຄວາມສົນໃຈເຮັດວຽກໃນໂຄງການຊ່ວຍເຫຼືອເດັກຂ້າງຖະໜົນບໍ່? ມັກໃຫ້ການຊ່ວຍເຫຼືອເດັກ ແລະ ໄວໜຸ່ມທີ່ດ້ອຍໂອກາດຫຼືບໍ່? ຖ້າທ່ານມັກ ແລະ ສົນໃຈ ມາຮ່ວມກັບທີມງານຂອງພວກເຮົາ!

**ອົງການ ເຟັຣນອິນເຕີເນເຊິນເນວ໌** ສ້າງຕັ້ງຂຶ້ນໃນປີ 1994 ຢູ່ພະນົມເປັນ ແລະ ມີສໍານັກງານຢູ່ລາວ ຕັ້ງແຕ່ປີ 2004. ວິໄສທັດຂອງພວກເຮົາແມ່ນ ເດັກທຸກຄົນ, ໄວໜຸ່ມ, ແລະຜູ້ປົກຄອງ ຂອງເຂົາເຈົ້າປອດໄພຈາກໄພອັນຕະລາຍສາມາດເຂົ້າເຖິງການສຶກສາ, ການຝຶກອົບຮົມ ແລະ ມີວຽກເຮັດງານທຳ ເພື່ອກາຍມາເປັນພົນລະເມືອງທີ່ມີປະສິດຕິພາບ. ເຮົາມີທີມງານຢູ່ກຳປູເຈຍ, ໄທ, ລາວ, ອິນໂດເນເຊຍ, ມຽນມາ ແລະ ເອີຣົບ ໃຫ້ບໍລິການນະວັດຕະກຳທີ່ເນັ້ນໃສ່ການປົກປ້ອງເດັກ, ວຽກງານສັງຄົມ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ທັກສະທີ່ຈຳເປັນອື່ນໆ!

## ໜ້າວຽກຫຼັກ ແລະ ເງື່ອນໄຂ

**I./ ຊ່າງສ້ອມແປງລົດຈັກ/ ລົດຖີບ 1ຕຳແໜ່ງ:**

- ມີປະສົບການໃນການສ້ອມແປງລົດຈັກມາກ່ອນ
- ມີໃບປະກາດ/ໃບຢັ້ງຢືນໃນສາຂາທີ່ກ່ຽວຂ້ອງ
- ສາມາດນຳພາໄວໜຸ່ມສ້ອມແປງລົດຈັກ ແລະ ລົດຖີບ ພາກທິດສະດີ ແລະ ປະຕິບັດຕົວຈິງ
- ຮັບຜິດຊອບຕາຕະລາງ, ກະກຽມສະຖານທີ່ ແລະ ອຸປະກອນໃນການສ້ອມແປງ
- ມີມະນຸດສຳພັນດີ, ມັກເຮັດວຽກຮ່ວມກັບໄວໜຸ່ມ ແລະ ມີຄວາມຫ້າວຫັນ
- ມີຄວາມຢືດຢຸ່ນ, ພ້ອມທີ່ຈະປັບປ່ຽນ ແລະ ຮຽນຮູ້.

**II./ ຊ່າງຕັດຜົມ (ຊາຍ) 1ຕຳແໜ່ງ**

- ມີປະສົບການ ແລະ ທັກສະໃນການຕັດຜົມ, ສາມາດຖ່າຍທອດຄວາມຮູ້ໃຫ້ກັບໄວໜຸ່ມ
- ມີໃບປະກາດ/ໃບຢັ້ງຢືນໃນສາຂາທີ່ກ່ຽວຂ້ອງ
- ສາມາດນຳພາໄວໜຸ່ມໃນການຕັດຜົມທັງພາກທິດສະດີ ແລະ ປະຕິບັດຕົວຈິງ
- ຮັບຜິດຊອບຕາຕະລາງ, ກະກຽມສະຖານທີ່ ແລະ ອຸປະກອນໃນການຕັດຜົມຊາຍ
- ມີມະນຸດສຳພັນດີ, ມັກເຮັດວຽກຮ່ວມກັບໄວໜຸ່ມ ແລະ ມີຄວາມຫ້າວຫັນ
- ມີຄວາມຢືດຢຸ່ນ, ພ້ອມທີ່ຈະປັບປ່ຽນ ແລະ ຮຽນຮູ້.

**III./ ນັກສັງຄົມສົງເຄາະ 4ຕຳແໜ່ງ**

- ມີຄວາມຮູ້ວຽກສັງຄົມສົງເຄາະ ແລະ ປະສົບການເຮັດວຽກກັບເດັກ, ໄວໜຸ່ມ, ຄອບຄົວ
- ມີໃບປະກາດ/ໃບຢັ້ງຢືນ ໃນສາຂາທີ່ກ່ຽວຂ້ອງ
- ສາມາດນຳພາ, ດຳເນີນກິດຈະກຳມ່ວນຊື່ນ, ທັກສະຊີວິດ ແລະ ໂຄສະນາປູກຈິດສຳນຶກ
- ໃຫ້ການຊ່ວຍເຫຼືອ, ຕິດຕາມ, ປະສານງານ ກັບເດັກ, ຄອບຄົວ, ຊຸມຊົນ ແລະ ຄູ່ຮ່ວມງານ
- ສາມາດສື່ສານກັບກຸ່ມເປົ້າໝາຍເປັນ ພາສາຂະມຸ ຫຼື ພາສາມົ້ງ ໄດ້ຍິ່ງເປັນການດີ
- ມີຄວາມຍືດຢຸ່ນ, ມັກໃນການຮຽນຮູ້ ແລະ ມີມະນຸດສຳພັນດີ.

**IV./ ພະນັກງານນຳສົ່ງເຂົ້າເຮັດວຽກ 2ຕຳແໜ່ງ**

- ຕິດຕໍ່ກັບບັນດາຮ້ານອາຫານ, ໂຮງແຮມ, ບໍລິສັດຕ່າງໆເພື່ອນຳສົ່ງໄວໜຸ່ມເຂົ້າເຮັດວຽກ
- ໃຫ້ຄຳປຶກສາ, ກະກຽມ, ສະໜັບສະໜູນ ແລະ ຕິດຕາມ ໄວໜຸ່ມ/ຜູ້ປົກຄອງເຂົ້າເຮັດວຽກ
- ກະກຽມ, ຊ່ວຍເຫຼືອ ແລະ ຕິດຕາມ ໄວໜຸ່ມ/ຄອບຄົວປະກອບທຸລະກິດຂະໜາດນ້ອຍ
- ສາມາດສື່ສານເປັນພາສາອັງກິດໄດ້
- ມີຄວາມຫ້າວຫັນ, ມັກເຮັດວຽກກັບຊຸມຊົນ ແລະ ຜູ້ປະກອບການຕ່າງໆ
- ມີຄວາມຍືດຢຸ່ນ, ພ້ອມທີ່ຈະປັບປ່ຽນ ແລະ ຮຽນຮູ້.

**ເຂົ້າຮ່ວມກັບພວກເຮົາໂດຍ**: ສົ່ງຈົດໝາຍສະໝັກງານ ແລະ ຊີວະປະຫວັດ ພ້ອມດ້ວຍເງິນເດືອນທີ່ຕ້ອງການ ເຖິງ:

- ຮ້ານອາຫານໄຄແຜ່ນ, ບ້ານຈູມຄ້ອງ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ (ກົງກັນຂ້າມ ກັບໜ້າວັດຈູມຄ້ອງ) ເບີໂທ **071 254135** ຫຼື **020 55999817** ຫຼື **020 55905511**
- ຫຼື ສົ່ງມາທີ່ອີເມວ hr.laos@friends-international.org

ຜູ້ທີ່ຖືກເລືອກແມ່ນຈະຕ້ອງໄດ້ປະຕິບັດຕາມນະໂຍບາຍການປົກປ້ອງເດັກ ແລະ ກົດລະບຽບປົກປ້ອງເພື່ອຕ້ານແລະ ສະກັດກັ້ນການສະແຫວງຫາຜົນປະໂຫຍດ ແລະ ການລ່ວງລະເມີດທາງເພດ.

Friends team